ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທະນາຄານແຫ່ງ ສປປ ລາວ ຄັ້ງທີ IV ເປີດຂຶ້ນຢ່າງເປັນທາງການ







ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກທະນາຄານແຫ່ງ ສປປ ລາວ (ທຫລ) ຄັ້ງທີ IV ໄດ້ເປີດຂຶ້ນຢ່າງເປັນທາງການໃນວັນທີ 14 ກັນຍາ 2020 ຊຶ່ງຈະດຳເນີນເປັນເວລາ 1 ວັນເຄິ່ງ ທີ່ສະຖາບັນການທະນາຄານ. ພາຍໃຕ້ການເປັນປະທານຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ ທຫລ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ນາງ ປານີ ຢາທໍ່ຕູ້ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແລະ ມີຜູ້ຕາງໜ້າຈາກຫ້ອງວ່າການສູນກາງພັກ, ຄະນະຈັດຕັ້ງສູນກາງພັກ, ຄະນະກວດກາສູນກາງພັກ, ພະນັກງານປະຕິວັດອາວຸໂສ ບຳນານ, ບັນດາຜູ້ແທນສົມບູນ 131 ສະຫາຍ, ຍິງ 47 ສະຫາຍທີ່ເປັນຕົວແທນໃຫ້ແກ່ສະມາຊິກພັກທັງໝົດຈຳນວນ 909 ສະຫາຍໃນທົ່ວອົງຄະນະພັກ ທຫລ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ຮັບຟັງການຜ່ານຮ່າງລາຍງານການເມືອງຂອງອົງຄະນະພັກ ທຫລ ສະໄໝທີ III ທີ່ສະເໜີໂດຍສະຫາຍ ສອນໄຊ ສິດພະໄຊ ເລຂາຄະນະພັກ ທຫລ ໂດຍໄດ້ຍົກໃຫ້ເຫັນຜົນງານການເຄື່ອນໄຫວໃນໄລຍະ 5 ປີຜ່ານມາ ພາຍໃຕ້ການຊີ້ນຳ-ນຳພາຂອງສູນກາງພັກ; ຄະນະພັກຂັ້ນຕ່າງໆ ພ້ອມດ້ວຍສະມາຊິກພັກ-ພະນັກງານຂອງຂະແໜງທະນາຄານ ທີ່ໄດ້ຜ່ານຜ່າສິ່ງທ້າທາຍທົດສອບນາໆປະການ ແລະ ພ້ອມກັນສູ້ຊົນຍາດໄດ້ຜົນງານອັນໃຫຍ່ຫຼວງຫຼາຍດ້ານ; ເປັນຕົ້ນສາມາດຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງໂດຍພື້ນຖານ, ອັດຕາເງິນເຟີ້, ປະລິມານເງິນ, ອັດຕາແລກປ່ຽນ ແລະ ຄັງສຳຮອງເງິນຕາຕ່າງປະເທດ ຢູ່ໃນລະດັບທີ່ກຳນົດໄວ້; ລະບົບທະນາຄານທຸລະກິດ ແລະ ສະຖາບັນການເງິນ ມີການຂະຫຍາຍຕົວ ແລະ ການເຄື່ອນໄຫວ ມີປະສິດທິພາບດີສົມຄວນ; ການລະດົມທຶນ ແລະ ການສະໜອງສິນເຊື່ອສະເລ່ຍເພີ່ມຂຶ້ນ, ຫຼຸດຜ່ອນບັນດາເມືອງ ທີ່ບໍ່ມີຕາໜ່າງທະນາຄານໃນເມື່ອກ່ອນມີ 38 ເມືອງ ແຕ່ປະຈຸບັນຍັງເຫຼືອແຕ່ 6 ເມືອງ; ລະບົບການຊຳລະ ແລະ ການບໍລິການຂອງທະນາຄານທັນໄປສູ່ຄວາມທັນສະໄໝ, ລວມສູນ ແລະ ປອດໄພ; ການຮ່ວມມືກັບສາກົນນັບມື້ນັບກວ້າງຂວາງ ແລະ ເຄື່ອນໄຫວຕາມແນວທາງການຕ່າງປະເທດຂອງພັກ ໂດຍສະເພາະການຮ່ວມມືສອງຝ່າຍ, ຫຼາຍຝ່າຍໃນຫຼາຍລະດັບ ຊຶ່ງສາມາດຍາດແຍ່ງທຶນຮອນ ແລະ ການຊ່ວຍເຫຼືອດ້ານວິຊາການນັບມື້ເພີ່ມຂຶ້ນ ເຮັດໃຫ້ຖານະບົດບາດຂະແໜງທະນາຄານຂອງ ສປປ ລາວ ໃນເວທີພາກພື້ນ ແລະ ສາກົນ ໄດ້ຮັບການຍົກສູງຂຶ້ນກວ່າເກົ່າ.

ວຽກງານກໍ່ສ້າງພັກ-ພະນັກງານ: ໄດ້ຖືເອົາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນວຽກໃຈກາງຂອງການເຄື່ອນໄຫວປະຕິບັດໜ້າທີ່ການເມືອງຂອງແຕ່ລະຮາກຖານພັກ; ໄດ້ປັບປຸງການຈັດຕັ້ງໃຫ້ມີຄວາມເຂັ້ມແຂງຢູ່ 48 ຮາກຖານພັກ, ສ້າງຕັ້ງໃໝ່ 2 ໜ່ວຍພັກຮາກຖານ ແລະ ປັບປຸງໜ່ວຍພັກທີ່ມີສະມາຊິກພັກຈຳນວນຫຼາຍ ໂດຍແຍກ ແລະ ສ້າງຕັ້ງໃໝ່ 8 ໜ່ວຍພັກ, ປັບປຸງຄະນະໜ່ວຍພັກ-ຄະນະພັກຮາກຖານໃຫ້ສອດຄ່ອງກັບການປັບປຸງເບື້ອງລັດ; ເອົາໃຈໃສ່ປັບປຸງຄຸນນະພາບຂອງສະມາຊິກພັກໃຫ້ມີຄຸນນະພາບສູງຍິ່ງຂຶ້ນ ໄປຄຽງຄູ່ກັບການຂະຫຍາຍສະມາຊິກພັກ. ຊຶ່ງຜ່ານການຕີລາຄາຄຸນນະພາບຂອງໜ່ວຍພັກໃນການກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ ໃນປີ 2015-2017 ສາມາດຮັບຮອງໜ່ວຍພັກປະເພດດັ່ງກ່າວໄດ້ ກວມ 60% ຂອງຈຳນວນໜ່ວຍພັກທີ່ໄດ້ຮັບການຕີລາຄາ; ສຳລັບປີ 2018 ແລະ 2019 ສາມາດຮັບຮອງໜ່ວຍພັກປະເພດປອດໃສ, ເຂັ້ມແຂງ, ໜັກແໜ້ນ ກວມ 33,3% ແລະ 45% ທຽບໃສ່ໜ່ວຍພັກທີ່ໄດ້ຮັບການຕີລາຄາ ຕາມລຳດັບ.

ຄະນະພັກ ທຫລ ໄດ້ເອົາໃຈໃສ່ຊີ້ນຳ ນຳພາປັບປຸງກົງຈັກການຈັດຕັ້ງລັດແຕ່ລະຂັ້ນ ໃຫ້ສອດຄ່ອງກັບສະພາບການເລັ່ງທວງຂອງວຽກງານຕົວຈິງຢ່າງເປັນລະບົບຄົບຊຸດ ເພື່ອໃຫ້ເຄື່ອນໄຫວໄດ້ຢ່າງຄ່ອງຕົວຍິ່ງຂຶ້ນ ເປັນຕົ້ນແມ່ນການປັບປຸງພາລະບົດບາດ ແລະ ສັບຊ້ອນກົງຈັກຈຳນວນໜຶ່ງຄືນໃໝ່ ຕາມການປ່ຽນແປງຂອງໜ້າທີ່ວຽກງານໃນແຕ່ລະໄລຍະ ຕາມທິດກະທັດຮັດ, ສົມເຫດສົມຜົນ ແລະ ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງວຽກງານ ສະແດງອອກກົງຈັກການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດລັດ ໄດ້ຮັບການປັບປຸງ ແລະ ໂດຍລວມສາມາດເຄື່ອນໄຫວຢ່າງມີປະສິດທິຜົນສູງຂຶ້ນ. ໄດ້ເອົາໃຈໃສ່ໃນການບຳລຸງ-ກໍ່ສ້າງ, ສັບຊ້ອນ-ຈັດວາງ ແລະ ປະຕິບັດລະບອບນະໂຍບາຍອຸດໜູນຕ່າງໆ ຕໍ່ພະນັກງານ ຕາມລະບຽບການ ແລະ ເງື່ອນໄຂຕົວຈິງ; ສິ່ງສຳຄັນ, ມາເຖິງປັດຈຸບັນຢູ່ຂະແໜງທະນາຄານ ໄດ້ສ້າງ ແລະ ຮັບຮອງແຜນກຳນົດພະນັກງານນຳ-ຄຸ້ມຄອງຂັ້ນຕ່າງໆສຳເລັດ ຊຶ່ງເປັນພື້ນຖານອັນໜັກແໜ້ນໃນການກໍ່ສ້າງ ແລະ ນຳໃຊ້ໃນຕໍ່ໜ້າ ຊຶ່ງໂດຍລວມໄປຕາມທິດຫັນເປັນໜຸ່ມຫຼາຍຂຶ້ນ; ຫັນບາງນິຕິກຳກ່ຽວກັບວຽກງານນະໂຍບາຍຂອງຂັ້ນເທິງ ເພື່ອສ້າງ ແລະ ປັບປຸງລະບຽບການພາຍໃນຂອງຕົນ. ສຳລັບຢູ່ທະນາຄານທຸລະກິດລັດ ກໍ່ໄດ້ປັບປຸງນະໂຍບາຍຕໍ່ພະນັກງານຂອງໃຜລາວ ໂດຍອີງໃສ່ນະໂຍບາຍລວມຂອງຂັ້ນເທິງກ່ຽວຂ້ອງບົນຈິດໃຈປະຢັດ. ນອກນີ້ ຍັງໄດ້ຊຸກຍູ້ບັນດາອົງການຈັດຕັ້ງມະຫາຊົນ ໃຫ້ເຄື່ອນໄຫວຕາມພາລະບົດບາດຂອງຕົນ ໂດຍສະເພາະເປັນເຈົ້າການເຕົ້າໂຮມຄວາມສາມັກຄີຂອງສະມາຊິກຕົນເພື່ອຂັບເຄື່ອນວຽກງານວິຊາສະເພາະຂອງຂະແໜງທະນາຄານໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

ສຳລັບທິດທາງ, ຄາດໝາຍ ແລະ ໜ້າທີ່ຕົ້ນຕໍໃນການຊີ້ນຳ-ນຳພາ ໃນ 5 ປີຕໍ່ໜ້າແມ່ນສືບຕໍ່ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ, ຄວາມສາມາດໃນການນຳພາຂອງຄະນະພັກທຸກຂັ້ນໃນທຸກຂົງເຂດວຽກງານ ແລະ ຄວາມເປັນແບບຢ່າງນຳໜ້າສະມາຊິກພັກຕໍ່ຄວາມຮັບຜິດຊອບທາງການເມືອງພາຍໃຕ້ການຊີ້ນຳ-ນຳພາຂອງກົມການເມືອງສູນກາງພັກ; ສືບຕໍ່ປັບປຸງການຈັດຕັ້ງແຕ່ລະຂັ້ນໃຫ້ມີຄວາມປອດໃສເຂັ້ມແຂງໜັກແໜ້ນ ຕົ້ນຕໍ; ເຂັ້ມງວດດ້ານລະບຽບວິໄນໃນການປັບປຸງກໍ່ສ້າງພັກ-ພະນັກງານ ໂດຍສະເພາະດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດເປັນບັນຫາສຳຄັນຕົ້ນຕໍ; ບຳລຸງກໍ່ສ້າງພັກ-ພະນັກງານ ໃຫ້ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອເປັນການເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແລະ ສືບຕໍ່ປະຕິບັດໜ້າທີ່ການເມືອງຂອງຕົນ ຢ່າງມີປະສິດທິຜົນ. ສືບຕໍ່ປັບປຸງແບບແຜນການນຳພາ-ວິທີເຮັດວຽກຂອງຄະນະພັກຂັ້ນຕ່າງໆໃຫ້ສອດຄ່ອງຕາມຫຼັກການຂອງພັກ ຢ່າງມີວິທະຍາສາດ ແລະ ແທດເໝາະກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ, ລວມທັງກົນໄກປະສານງານລະຫວ່າງສາຍຕັ້ງ ແລະ ສາຍຂວາງ; ຂັ້ນເທິງກັບຂັ້ນລຸ່ມ, ອຳນາດການປົກຄອງກັບຂະແໜງການກ່ຽວຂ້ອງ ເພື່ອອຳນວຍຊ່ວຍໜູນເຊິ່ງກັນ ແລະ ກັນ ໃນການຈັດຕັ້ງປະຕິບັດບັນດາທິດທາງແຜນການທີ່ຂັ້ນເທິງກຳນົດໄວ້ໃຫ້ປະກົດຜົນເປັນຈິງ; ພັດທະນາລະບົບການເງິນ-ເງິນຕາຂອງ ສປປ ລາວ ດ້ວຍການໝູນໃຊ້ເສດຖະກິດຕະຫຼາດທີ່ມີການຄຸ້ມຄອງຂອງລັດຢ່າງມີວິທະຍາສາດ ເພື່ອຮັບປະກັນສະຖຽນລະພາບດ້ານເງິນຕາແຫ່ງຊາດໃຫ້ໝັ້ນທ່ຽງ, ພັດທະນາລະບົບສະຖາບັນການເງິນ-ເງິນຕາໃຫ້ເຂັ້ມແຂງ-ໝັ້ນຄົງ; ຄົ້ນຄວ້ານະໂຍບາຍເພື່ອຫຼຸດຜ່ອນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກ ເພື່ອຫຼຸດຜ່ອນການຂາດດຸນກັບຕ່າງປະເທດ; ປະກອບສ່ວນຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ໃຫ້ຂະຫຍາຍຕົວຢ່າງມີຄຸນນະພາບ, ສົມດຸນ ແລະ ຍືນຍົງ; ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການຍົກລະດັບດີຂຶ້ນ ແລະ ສາມາດແຂ່ງຂັນໃນເງື່ອນໄຂການເຊື່ອມໂຍງກັບສາກົນ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ.**